# ການປ້ອງກັນ ແລະ ການຕອບໂຕ້ຕໍ່ກັບການລະບາດຂອງພະຍາດໂຄວິດ 19 ກິດຈະກໍາຂອງ 5 ສະມາຄົມ



| ID: | Author: | Organization: | Created date: |
|---|---|---|---|
| 90 | APL | APL+ | 2020-06-18 00:00:00 |

### 1. ກ່ຽວກັບສະພາບບັນຫາທີ່ໂຄງການຢາກຈະແກ້ໄຂ / About the problem that project want to solve.

ໃນວັນທີ 13 ພຶດສະພາ 2020 ໄດ້ມີ ການເປີດກອງປະຊຸມສະເພາະກິດ ການຮັບມື ຕອບໂຕ້ ໂຄວິດ-19 (covid-19) ຂຶ້ນທີ່ຫ້ອງປະຊຸມ ສູນຕ້ານເອດ-ພຕພ ທີ່ ນະຄອນຫຼວງວຽງຈັນ.

ໂດຍການເປັນປະທານ ຂອງທ່ານ ດຣ ລັດຕະນະໄຊ ເພັດສຸວັນ ຫົວໜ້າກົມປິ່ນປົວ ກະຊວງສາທາລະນະສຸກ ເຊິ່ງມີຜູ້ເຂົ້າຮ່ວມຄົບຄະນະ ໂດຍສະເພາະແມ່ນ ເຈົ້າພາບກະຊວງສາທາລະນະສຸກ ແລະ ຜູ້ໃຫ້ທຶນ ໃນກອງປະຊຸມແມ່ນ ໄດ້ປຶກສາຫາລື ວາງແຜນ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19 (covid-19) ແລະ ວາງແຜນຮັບມື ປີ 2021 ,ເນື່ອງຈາກວ່າບໍ່ມີໃຜບອກໄດ້ວ່າ ພະຍາດໂຄວິດ -19 (covid-19) ໝົດໄປຕອນໃດ

ບັນຫາ: ອີງຕາມການລາຍງານຈາກຫຼາຍປະເທດ ທີ່ບອກວ່າ, ຄົນທີ່ເສຍຊີວິດຈາກພະຍາດ ດັ່ງກ່າວແມ່ນ ມີພະຍາດອື່ນຮ່ວມ ເຊັ່ນ: ເບົາຫວານ,ຄວາມດັນເປັນຕົ້ນ, ສະນັ້ນພະຍາດເອດ ກໍແມ່ນພະຍາດ ໜຶ່ງທີ່ເປັນພະຍາດຊໍາເຮື້ອ ແລະ ທີ່ສໍາຄັນຄົນທີ່ຕິດພະຍາດເອດ ຕ້ອງໄດ້ກິນຢາຕະຫຼອດຊີວິດ ເຊິ່ງມັນເປັນຄວາມສ່ຽງສູງຖ້າຫາກພວກເຂົາສໍາພັດຫຼືຕິດພະຍາດໂຄວິດ, ສະນັ້ນ, ທາງຄະນະກໍາມະການກອງທຶນໂລກໄດ້ເລັ່ງເຫັນຄວາມສໍາຄັນໃນກຸ່ມປະຊາກອນດັ່ງກ່າວຈຶ່ງໄດ້ອະນຸມັດງົບປະ

**ມານ $2,122,483 ,ໃຫ້ກັບສາມພະຍາດ ເອດ,ວັນນະໂລກ ແລະ ມາລາເລຍ ທີ່ທາງກອງທຶນໂລກໄດ້ສະໜັບສະໜູນກິດຈະກໍານີ້ຢູ່ແລ້ວ.**

**ຈຸດປະສົງ :**

1. **ເພື່ອການນໍາສົ່ງຢາໃຫ້ຄົນເຈັບທີ່ຕິດເຊື້ອເຮສໄອວີ/ເອດ**

2. **ເພື່ອກວດຄັດກອງພະຍາດວັນນະໂລກ ແລະ ມາລາເລຍ**

## 2. ໂຄງການໄດ້ເຮັດຫຍັງແດ່ເພື່ອແກ້ໄຂບັນຫາ / About how the project solve the problems

1. ກິດຈະກໍາ ການປ້ອງກັນ ແລະ ການເຝົ້າລະວັງ ພະຍາດໂຄວິດ(Covid) ທາງການແພດ ໃນທຸກໂຮງໝໍທົ່ວປະເທດ ໂດຍສະເພາະໂຮງໝໍ ທີ່ມີສູນ ART ປິ່ນປົວຜູ້ຕິດເຊື້ອເຮສໄອວີ/ເອດ
2. ກິດຈະກໍາການນໍາສົ່ງຢາໃຫ້ຄົນໄຂ້ເອດ ເປັນລາຍບຸກຄົນ
3. ກິດຈະກໍາ ຕິດຕາມ ແລະ ກັນຕອງພະຍາດພະຍາດຮ່ວມ ເຊັ່ນ ວັນນະໂລກ ແລະ ມາລາເລຍ
4. ກິດຈະກໍາມອບ ອຸປະກອນປ້ອງກັນ ແລະ ເຄື່ອງມືທາງການແພດໃຫ້ແກ່ໂຮງໝໍຕ່າງໆ

## 3. ຜົນສໍາເລັດຂອງໂຄງການ / Results of the project

1. ໄດ້ນໍາສົ່ງຢາໃຫ້ຄົນໄຂ້ທີ່ຕິດເຊື້ອເຮສໄອວີເອດ ໃນ 11 ສູນ ART ທີ່ໃຫ້ບໍລິການ ຢາ ARV ໃນທົ່ວປະເທດ ຈໍານວນ 4 ພັນກວ່າຄົນ
2. ໄດ້ຊ່ວຍເຫຼືອ ອຸປະກອນໃນການປ້ອງກັນ ແລະ ເຄື່ອງມືການແພດໃຫ້ກັບ 4 ໂຮງໝໍເມືອງທີ່ຈໍາເປັນ ເຊັ່ນ: ໂຮງໝໍ ເມືອງ ໄຊທານີ, ເມືອງປາກງື່ມ, ເມືອງສັງທອງ ແລະ ເມືອງເຟືອງ ລວມງົບປະມານໃນການຊ່ວຍເຫຼືອໃນຄັ້ງນີ້ ເປັນຈໍານວນເງິນ 156,225,000 ກີບ

    5 ອົງການ ນໍາທີມໂດຍ:

    1. ສະມາຄົມ ເຄືອຂ່າຍຜູ້ຕິດເຊື້ອເຮັສໄອວີ/ເອດ (APL+)
    2. ສະມາຄົມ ເພື່ອພັດທະນາແມ່ຍິງ ແລະ ສຶກສາກົດໝາຍ (ADWLE)
    3. ສະມາຄົມ ພັດທະນາຊຸມຊົນ ແລະ ສິ່ງແວດລ້ອມ (CDEA)
    4. ສະມາຄົມ ພັດທະນາບົດບາດຍິງ-ຊາຍ (GDA)
    5. ສະມາຄົມ ສົ່ງເສີມສຸກຂະພາບຄອບຄົວ (PFHA)

## 4. ປັດໄຈສູ່ຜົນສໍາເລັດ / Factors of success

- ລັດມີນະໂຍບາຍທີ່ເປີດກວ້າງໂດຍ:
- ອີງຕາມ ຄໍາສັ່ງ ຂອງທ່ານ ນາຍົກ ລັດຖະມົນຕີ ເລກທີ 06/ນຍ, ລົງວັນທີ 29 ມີນາ 2020;
- ອີງຕາມ ກອງປະຊຸມອອນລາຍ ກ່ຽວກັບ: ແຜນການຕ້ານ COVID-19 CARE Partners ວັນທີ 21 ເມສາ 2020.
- ຄວາມເອົາໃຈໃສ່, ຄວາມເອື້ອເຟື້ອເພື່ອແຜ່ ແລະ ຄວາມເສຍສະຫຼະ ຂອງ 5 ອົງການທາງສັງຄົມທີ່ເຮັດວຽກທີ່ບໍ່ຫວັງຜົນກໍາໄລ
- ຄວາມສໍາພັນອັນແໜ້ນແຟ້ນ ລະຫວ່າງອົງການຈັດຕັ້ງທາງສັງຄົມ ກັບ ອົງການຈັດຕັ້ງລັດ ຍາມໃດກໍ່ຕ້ອງໄດ້ໄປຄຽງຄູ່ກັນ,ຢ່າງແຍກກັນບໍ່ອອກ
- ຂໍ້ມູນຄວາມຕ້ອງການ ທີ່ເປັນຄວາມຈິງຂອງ ຜູ້ໄດ້ຮັບຜົນກະທົບ(ຊຸມຊົນ) ແລະ ຜູ້ໃຫ້ບໍລິການ(ໂຮງໝໍເມືອງ) ແມ່ນຊັດເຈນ ລະຫວ່າງຜູ້ໃຫ້ ແລະ ຜູ້ຮັບ
- ອົງການຈັດຕັ້ງທາງສັງຄົມເຮັດວຽກ ໃນຍຸດທະສາດເອົາຊຸມຊົນເປັນຈຸດໃຈກາງ

## 5. ຂໍ້ຈຳກັດທີ່ເຮັດໃຫ້ບໍ່ສຳເລັດຜົນໄດ້ດີ / Limitations

1. ລະບົບ ແລະ ຂັ້ນຕອນຂອງການຜ່ານແຜນງົບປະມານແມ່ນຍັງຊ້າບໍ່ທັນເຫດການ ໃນສະຖານະການສຸກເສີນເລັ່ງດ່ວນ
2. ລະບຽບກົດໝາຍສະເພາະການປິດກັ້ນເມືອງ ກໍ່ແມ່ນບັນຫາ ໜຶ່ງທີ່ເຮັດໃຫ້ ການສະໜອງວັດຖຸອຸປະກອນກໍ່ຕ້ອງຢຸດສະງັກໄປຕາມໆກັນ
3. ມັນເປັນຄ້າຍໆ ອຸປະຕິເຫດ ພວກເຮົາບໍ່ໄດ້ວາງແຜນໄວ້ລ່ວງໜ້າ ການລະບາດໄວເກີນກວ່າທີ່ເຄີຍພົບມາ

## 6. ຂໍ້ແນະນຳສຳລັບຜູ້ທີ່ສົນໃຈຢາກທົດລອງນຳໃຊ້ / Recommendations for scaling up

1. ຂໍ້ມູນແມ່ນສິ່ງທີ່ສຳຄັນແຕ່ຈະຕ້ອງເປັນຄວາມຈິງ ບໍ່ແມ່ນຂໍ້ມູນມືສອງ
2. ຄົນທີ່ຈະເຮັດຕ້ອງຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງຂອງບັນຫາ ໃຫ້ດີແທ້ຈະຕ້ອງໄດ້ເຫັນ ແລະ ໄດ້ສຳຜັດຍິ່ງເປັນການດີ
3. ຕ້ອງໃຈ້ແຍກໃຫ້ອອກ ແລະ ສິ່ງທີ່ສຳຄັນຄື ພາຄີຄູ່ຮ່ວມງານ
4. ຕ້ອງມີຄວາມຈິງໃຈ







